**ກະ ຊວງ ຍຸຕິທຳສະຫະລັດ**
*ກົມສິດທິພົນລະເມືອງ*

**ກະຊວງສຶກສາທິການສະຫະລັດ**
*ຫ້ອງການສິດທິມະນຸດ ຂອງ*

# ຂໍ້ມູນສຳລັບພໍ່ແມ່ ແລະຜູ້ປົກຄອງທີ່ມີຄວາມຄ່ອງແຄ້ວດ້ານພາສາອັງກິດຈຳກັດ (LEP) ແລະສຳລັບໂຮງຮຽນ ແລະເຂດການສຶກສາທີ່ສື່ສານກັບເຂົາເຈົ້າ

ໃບ ຂໍ້ມູນນີ້ຕອບພັນດາຄຳ ຖາມທີ່ມັກຖາ ມກ່ຽວກັບສິດທິຂອງພໍ່ແມ່ ແລະຜູ້ປົກຄອງຜູ້ທີ່ເວົ້າ, ຟັງ, ອ່ານ ຫຼືຂຽ ນພາ ສາອັງກິດບໍ່ຄ່ອງແຄ້ວ ເພາະວ່າມັນບໍ່ແມ່ນພາສາຕົ້ນຕໍຂອງ ເຂົາເຈົ້າ.

## *ໂຮງຮຽນຂອງລູກຂ້ອຍຕ້ອງສະໜອງຂໍ້ມູນໃຫ້ຂ້ອຍໃນພາສາທີ່ຂ້ອຍສາມາດເຂົ້າໃຈໄດ້ແມ່ນບໍ?*

ແມ່ນ. ໂຮງ ຮຽ ນ ຕ້ອງສື່ສານແຈ້ງບອກຂໍ້ມູນໃຫ້ແກ່ພໍ່ແມ່ທີ່ມີຄວາ ມຄ່ອງແຄ້ງດ້ານພາ ສາອັງກິດ ຈຳກັດ ໃນ ພາ ສາທີ່ພວກເຂົາສາ ມາ ດເຂົ້າໃຈ ໄດ້ກ່ຽວກັບທຸກໂປຣ ແກຣມ ກາ ນບໍລິການ ຫຼືກິດຈະກຳທີ່ ຖືກແຈ້ງບອກໃຫ້ແກ່ພໍ່ແມ່ຜູ້ທີ່ມີຄວາ ມຄ່ອງແຄ້ວດ້ານພາ ສາອັງກິດ. ນີ້ກວມລວມ ແຕ່ບໍ່ ໄດ້ຖືກຈຳກັດ, ຂໍ້ມູນທີ່ກ່ຽວຂ້ອງກັບ:

- ກາ ນລົງທະ ບຽ ນແລະກາ ນລົງຊື່ເຂົ້າຮຽ ນໃນ ໂຮງ ຮຽ ນ ແລະໃນໂປຣ ແກຣມຕ່າງໆຂອງ ໂຮງ ຮຽ ນ
- ໂປ ຣແກຣມກາ ນຊ່ວຍເຫຼືອດ້ານພາ ສາ
- ບັດລາຍງາ ນ
- ນະ ໂຍບາ ຍ ແລະ ລະ ບຽ ບຂັ້ນຕອນກາ ນພະ ຕິ ບັດວິໄນ ຂອງນັກຮຽນ
- ກາ ນສຶກສາພິເສດ ແລະກາ ນບໍລິການທີ່ ກ່ຽວຂ້ອງແລະການປະຊຸມເພື່ອປຶກສາຫາລື ໃນວຽ ກງາ ນກາ ນສຶກສາພິເສດ
- ກອງປະຊຸມພໍ່ແມ່ນັກຮຽນ-ຄູອາ ຈາ ນ
- ຂັ້ນຕອນກາ ນຮ້ອງທຸກ ແລະແຈ້ງກາ ນກ່ຽວ ກັບກາ ນບໍ່ເລືອກປະຕິບັດ
- ປຶ້ມຄູ່ມືພໍ່ແມ່ນັກຮຽນ
- ໂປຣ ແກຣມເດັກເກັ່ງ ແລະ ມີພອນສະຫວັນ
- ໂຮງ ຮຽ ນແມ່ເຫຼັກ ແລະໂຮງ ຮຽ ນໃນທຶນ ຂອງລັດຖະບານ
- ກາ ນຮ້ອງຂໍຮັບການອະນຸຍາດຈາ ກພໍ່ ແມ່ຜູ້ປົກຄອງສຳລັບກາ ນເຂົ້າ ຮ່ວມຂອງນັກຮຽນໃນ ກິດຈະ ກຳຕ່າງໆໃນ ໂຮງ ຮຽ ນ

## *ໂຮງຮຽນຕ້ອງສະໜອງການຊ່ວຍເຫຼືອດ້ານພາສາໃຫ້ຖ້າຂ້ອຍຮ້ອງຂໍເອົາມັນເຖິງແມ້ວ່າລູກຂອງຂ້ອຍ ມີຄວາມຄ່ອງແຄ້ວດ້ານພາສາອັງກິດເປັນຢ່າງດີກໍ່ຕາມ ແລະຂ້ອຍເອງກໍ່ຄ່ອງແຄ້ວດ້ານພາສາອັງກິດ ພໍສົມຄວນແບບນີ້ຊິໄດ້ບໍ?*

ແມ່ນ. ໂຮງ ຮຽ ນ ຕ້ອງຕອບສະ ໜອງຕໍ່ກາ ນຮ້ອງຂໍເອົາກາ ນຊ່ວຍເຫຼືອດ້ານພາ ສາຂອງພໍ່ ແມ່ຜູ້ປົກຄອງ ແລະ ໂປດຈຳໄວ້ວ່າພໍ່ແມ່ສາ ມາ ດມີຄວາ ມ ຈຳກັດໃນການປາກເວົ້າພາສາອັງກິດທີ່ຄອ່ງແຄ້ວ ເຖິງແມ້ວ່າລູກຂອງເຂົາເຈົ້າຈະມີຄວາ ມຄ່ອງແຄ້ວ ດ້ານພາ ສາອັງກິດກໍ່ຕາມ.

## *ໂຮງຮຽນຂອງລູກຂ້ອຍອາດຈະຮ້ອງຂໍໃຫ້ລູກຂ້ອຍຫລືນັກຮຽນອື່ນໆ, ຫຼືພະນັກງານໂຮງຮຽນທີ່ບໍ່ໄດ້ຝຶກມາເປັນຢ່າງດີເປັນຜູ້ແປເອກະສານ ຫຼືແປພາກເປົ່າໃຫ້ຂ້ອຍໄດ້ບໍ?*

ບໍ່ໄດ້. ໂຮງຮຽນຕ້ອງສະໜອງການແປເອກະສານ ຫຼືການແປພາກເປົ່າຈາກບຸກຄົນທີ່ເໝາະສົມ ແລະມີຄວາມສາມາດຄົບຖ້ວນ ແລະບໍ່ສາມາດອີງໃສ່ ຫຼືຮ້ອງຂໍໃຫ້ນັກຮຽນ, ອ້າຍເອື້ອຍນ້ອງ, ໝູ່ເພື່ອນ ຫຼືພະນັກງານໂຮງຮຽນທີ່ບໍ່ໄດ້ຝຶກມາເປັນຢ່າງດີ ເຮັດໜ້າທີ່ເປັນຜູ້ແປເອກະສານ ຫຼືແປພາກເປົ່າໃຫ້ແກ່ພໍ່ແມ່ຫລືຜູ້ປົກຄອງທັງຫລາຍ.

## *ມີຂໍ້ມູນຫຍັງແດ່ທີ່ຂ້ອຍຄວນຄາດຫວັງຈາກໂຮງຮຽນຖ້າລູກຂອງຂ້ອຍແມ່ນຜູ້ຮຽນພາສາອັງກິດ?*

ເມື່ອລູກຂອງທ່ານຈົດທະບຽນເຂົ້າໂຮງຮຽນ, ທ່ານຄວນໄດ້ຮັບໃບສຳຫຼວດດ້ານພາສາໃນເຮືອນ ຫຼືແບບຟອມທີ່ຄ້າຍຄືກັນເພື່ອຕື່ມຂໍ້ມູນໃສ່ ເຊິ່ງຊ່ວຍໃຫ້ທາງໂຮງຮຽນຮັບຮູ້ເຖິງຄວາມສາມາດຂອງຜູ້ຮຽນພາສາອັງກິດເຊິ່ງເປັນຜູ້ທີ່ມີຄຸນສົມບັດເໝາະສົມສຳລັບການບໍລິການຊ່ວຍເຫຼືອດ້ານພາສາ. ຖ້າລູກຂອງທ່ານຖືກລະບຸວ່າເປັນຜູ້ຮຽນພາສາ, ໂຮງຮຽນຕ້ອງແຈ້ງບອກທ່ານເປັນລາຍລັກອັກສອນພາຍໃນ 30 ວັນນັບຈາກເລີ່ມເປີດສົກຮຽນ ເຊິ່ງເລີ່ມດ້ວຍຂໍ້ມູນທີ່ກ່ຽວກັບລະດັບຄວາມຄ່ອງແຄ້ວດ້ານພາສາອັງກິດຂອງລູກທ່ານ, ໂປຣແກຣມແລະການບໍລິການຕ່າງໆທີ່ມີໃຫ້ເພື່ອຕອບສະໜອງຄວາມຕ້ອງການດ້ານການສຶກສາຂອງລູກທ່ານແລະສິດທິຂອງທ່ານໃນການເລືອກບໍ່ເຂົ້າຮ່ວມໂປຣແກຣມຫຼືການບໍລິການສະເພາະໃດໜຶ່ງສຳລັບຜູ້ຮຽນພາສາອັງກິດ. ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບສິດທິຂອງຜູ້ຮຽນພາສາອັງກິດ, ໃຫ້ເຂົ້າເບິ່ງ http://www2.ed.gov/about/offices/list/ocr/docs/dcl-factsheet-el-students-201501-laotian.pdf.

## *ຂະບວນການປະເພດໃດແດ່ທີ່ເຂດການສຶກສາສາມາດໃຊ້ເພື່ອລະບຸພໍ່ແມ່ທີ່ມີຄວາມຄ່ອງແຄ້ວດ້ານພາສາອັງກິດຈຳກັດ?*

- ເຂດການສຶກສາຕ້ອງພັດທະນາ ແລະຈັດຕັ້ງປະຕິບັດຂະບວນການສຳລັບການກຳນົດວ່າພໍ່ແມ່ມີຄວາມຄ່ອງແຄ້ວດ້ານພາສາອັງກິດທີ່ຈຳກັດຫຼືບໍ່ ແລະລະບຸຄວາມຕ້ອງການດ້ານພາສາຂອງເຂົາເຈົ້າ.
- ຂະບວນການນັ້ນຄວນຖືກອອກແບບມາເພື່ອລະບຸພໍ່ແມ່ທຸກຄົນທີ່ມີຄວາມຄ່ອງແຄ້ວດ້ານພາສາອັງກິດທີ່ຈຳກັດ ລວມທັງພໍ່ແມ່ ແລະຜູ້ປົກຄອງຜູ້ທີ່ພາສາຕົ້ນຕໍຂອງເຂົາເຈົ້າບໍ່ແມ່ນພາສາທົ່ວໄປ ໃນເຂດການສຶກສານັ້ນ ຫຼືຜູ້ທີ່ລູກຂອງເຂົາເຈົ້າມີຄວາມຄ່ອງແຄ້ວດ້ານພາສາອັງກິດ.
- ຕົວຢ່າງວ່າ ເຂດການສຶກສາອາດຈະໃຊ້ການສຳຫຼວດພາສາທີ່ໃຊ້ຢູ່ເຮືອນ ເພື່ອສອບຖາມວ່າພໍ່ແມ່ຕ້ອງການການສື່ສານປາກເປົ່າ ແລະ/ຫຼືເປັນລາຍລັກອັກສອນໃນພາສາອື່ນທີ່ບໍ່ແມ່ນພາສາອັງກິດຫຼືບໍ່.
- ແນ່ນອນ, ການສອບຖາມເບື້ອງຕົ້ນຂອງໂຮງຮຽນຄວນຖືກແປເປັນພາສາທີ່ໃຊ້ກັນທົ່ວໄປໃນໂຮງຮຽນ ແລະຊຸມຊົນອ້ອມຂ້າງ ເພື່ອໃຫ້ບົດສອບຖາມນັ້ນຖືກອອກແບບມາເພື່ອສົ່ງເຖິງພໍ່ແມ່ຜູ້ປົກຄອງທັງຫລາຍໃນພາສາທີ່ເຂົາເຈົ້າສາມາດເຂົ້າໃຈໄດ້.

## *ບາດກ້າວໃດແດ່ທີ່ເຂດການສຶກສາຕ້ອງດໍາເນີນເພື່ອສະໜອງການຊ່ວຍເຫຼືອດ້ານພາສາຢ່າງມີປະສິດທິຜົນໃຫ້ແກ່ພໍ່ແມ່ທີ່ມີຄວາມຄ່ອງແຄ້ວດ້ານພາສາຈໍາກັດ ຫລືLEP?*

- ເຂດ ກາ ນສຶກສາຕ້ອງສະ ໜອງກາ ນຊ່ວຍເຫຼືອດ້ານພາ ສາຢ່າງມີປະສິດທິຜົນໃຫ້ແກ່ພໍ່ແມ່ທີ່ມີຄວາ ມຄ່ອງແຄ້ວດ້ານພາ ສາອັງກິດຈໍາກັດ ເຊັ່ນວ່າ ໂດ ຍການມອບໃຫ້ເອກະສານທີ່ໄດ້ແປແລ້ວ ຫຼືລ່າມແປພາ ສາ ປາ ກເປົ່າ. ກາ ນຊ່ວຍເຫຼືອດ້ານພາ ສາຕ້ອງບໍ່ເສ ຍຄ່າ ແລະຖືກສະ ໜອງໃຫ້ໂດຍ ພະນັກງານທີ່ເໝາະ ສົມ ແລະ ຊໍາ ນາ ນງາ ນ ຫຼືຜ່ານນັກແປຈາກຂ້າງນອກທີ່ເໝາ ະ ສົມ ແລະມີຄວາ ມຊໍາ ນາ ນງາ ນ.
- ເຂດ ກາ ນສຶກສາຄວນຮັບປະກັນວ່າລ່າມແປພາ ສາ ແລະນາ ຍແປພາ ສາຕ້ອງມີຄວາ ມຮູ້ໃນ ທັງສອງພາສາກ່ຽວກັບຄໍາ ສັບ ຫຼືເນື້ອໃນ ສະ ເພາະທີ່ຈະ ຖືກໃຊ້ໃນ ກາ ນສື່ສານທີ່ເວົ້າເຖິງແລະໄດ້ຜ່ານກາ ນຝຶກມາເປັນຢ່າງດີກ່ຽວກັບບົດບາດຂອງລ່າມແປພາ ສາ ແລະນາ ຍແປພາ ສາ, ຈັນຍາ ບັນຂອງກາ ນແປພາ ກເປົ່າ ແລະກາ ນແປເອກະ ສາ ນ , ແລະຄວາ ມຈໍາ ເປັນໃນ ກາ ນຮັກສາຄວາ ມລັບ.
- ມັນບໍ່ພຽງພໍໃນການໃຊ້ພະນັກງານທີ່ຮູ້ສອງພາ ສາເທົ່ານັ້ນ. ຕົວຢ່າງ, ພະນັກງານຜູ້ໜຶ່ງທີ່ຮູ້ສອງພາ ສາອາ ດຈະ ສາ ມາ ດສື່ສານໂດຍ ກົງກັບພໍ່ແມ່ທີ່ຮູ້ພາ ສາອັງກິດຈໍາກັດໃນ ພາ ສາອື່ນ, ແຕ່ອາ ດຈະ ບໍ່ສາ ມາ ດແປປາ ກເປົ່າເປັນ ຫຼືຈາກພາ ສານັ້ນໄດ້, ຫຼືແປເອກະສານຕ່າງໆໄດ້.

## *ຂ້ອຍສາມາດເຮັດຫຍັງໄດ້ແດ່ຖ້າຂ້ອຍມີຄໍາຖາມ, ຕ້ອງການຂໍ້ມູນເພີ່ມເຕີມ ຫຼືເຊື່ອວ່າໂຮງຮຽນກໍາລັງບໍ່ປະຕິບັດຕາມຂໍ້ກໍານົດເຫຼົ່ານີ້?*

- ທ່ານສາ ມາ ດເຂົ້າເບິ່ງເວັບໄຊ ທ໌ຂອງຫ້ອງການສິດທິພົນລະເມືອງ (OCR) ຂອງກະ ຊວງສຶກສາສະຫະລັດທີ່ www.ed.gov/ocr ຫຼືຕິດຕໍ່ຫາຫ້ອງການ OCR ທີ່ເບີໂທລະສັບ (800) 421-3481 (TDD: 800-877-8339) ຫຼືທີ່ ocr@ed.gov. ສໍາລັບຂໍ້ມູນເພີ່ມເຕີມກ່ຽວກັບກາ ນຍື່ນກາ ນຮ້ອງຮຽ ນ, ໃຫ້ເຂົ້າເບິ່ງ http://www2.ed.gov/about/offices/list/ocr/docs/howto-laotian.pdf.
- ທ່ານອາ ດຈະ ເຂົ້າເບິ່ງເວັບໄຊ ທ໌ຂອງກົມສິດທິພົນລະເມືອງຂອງກະ ຊວງຍຸຕິທໍາສະຫະລັດ ທີ່ www.justice.gov/crt/about/edu/ ຫຼືຕິດຕໍ່ຫາກະ ຊວງ DOJ ທີ່ເບີໂທລະສັບ (877) 292-3804 ຫຼື ອີເມລ education@usdoj.gov. ສໍາລັບຂໍ້ມູນເພີ່ມເຕີມກ່ຽວກັບກາ ນຍື່ນກາ ນຮ້ອງຮຽ ນ, ໃຫ້ເຂົ້າເບິ່ງ www.justice.gov/crt/complaint/#three.
- ສໍາລັບຂໍ້ມູນເພີ່ມເຕີມກ່ຽວກັບພັນທະໜ້າທີ່ຂອງເຂດ ກາ ນສຶກສາຕໍ່ກັບນັກຮຽນຜູ້ຮຽ ນພາ ສາອັງກິດ ແລະພໍ່ແມ່ທີ່ມີຄວາ ມຄ່ອງແຄ້ວດ້ານພາ ສາອັງກິດຈໍາກັດ, ຄໍາແນະ ນໍາເພີ່ມເຕີມຂອງຫ້ອງການ OCR ແມ່ນມີໃຫ້ທີ່ http://www2.ed.gov/about/offices/list/ocr/ellresources.html.